# ຫຼັກສູດ ສໍາລັບອົບຮົມ ອາສາສະມັກ ໄວໜຸ່ມ “ເພື່ອນຊ່ວຍເພື່ອນ”

ສະມາຄົມສົ່ງເສີມສຸຂະພາບຄອບຄົວ, 2016

# ບົດທີ 1

- ບົດບາດ ຂອງອາສາສະໝັກໄວໜຸ່ມ "ເພື່ອນຊ່ວຍເພື່ອນ"
- ໜ້າທີ່ ຂອງອາສາສະໝັກໄວໜຸ່ມ "ເພື່ອນຊ່ວຍເພື່ອນ"
- ເງື່ອນໄຂ ເຂົ້າເປັນອາສາສະໝັກໄວໜຸ່ມ "ເພື່ອນຊ່ວຍເພື່ອນ"
- ຄວາມຄາດຫວັງຈາກ ອາສາສະໝັກໄວໜຸ່ມ "ເພື່ອນຊ່ວຍເພື່ອນ"

# 1.1 ບົດບາດ ແລະ ໜ້າທີ່ ຂອງອາສາສະໝັກໄວໜຸ່ມ "ເພື່ອນຊ່ວຍເພື່ອນ"

- ເປັນຜູ້ກະຈາຍຄວາມຮູ້ ຫຼື ຂໍ້ມູນຂ່າວສານດ້ານສຸຂະພາບຂອງໄວໜຸ່ມ ລວມມີ ສຸຂະພາບຈະເລີນພັນ ແລະ ສິດທິຈະເລີນພັນ, ສິດທິທາງເພດຂອງໄວໜຸ່ມ, ບັນຫາສຸຂະພາບຂອງໄວໜຸ່ມ ແລະ ອື່ນໆ ທີ່ກ່ຽວຂ້ອງກັບໄວໜຸ່ມ
- ເປັນຜູ້ຊ່ວຍເຫຼືອ ແລະ ແນະນຳ ແກ່ໝູ່ເພື່ອນທີ່ຢູ່ອ້ອມຂ້າງ
- ເປັນຜູ້ເຊື່ອມຕໍ່ຄົນໃນໄວດຽວກັນ (ແບບເຄືອຂ່າຍ) ແລະ ຊ່ວຍຜັກດັນໝູ່ເພື່ອນ ໃຫ້ເວັ້ນຈາກພຶດຕິກຳສ່ຽງ
- ເປັນກຳລັງແຮງຊ່ວຍເຫຼືອສັງຄົມ

ສະມາຄົມສົ່ງເສີມສຸຂະພາບຄອບຄົວ (PFHA)

# 1.2 ໜ້າທີ່ ຂອງອາສາສະໝັກໄວໜຸ່ມ “ເພື່ອນຊ່ວຍເພື່ອນ”

- ► ໜ້າທີ່ສຳຄັນ ຄື ການເຜີຍແຜ່ຂໍ້ມູນ ດ້ານສຸຂະພາບຂອງໄວໜຸ່ມ ລວມມີ ສຸຂະພາບທາງເພດ/ການຈະເລີນພັນ, ສິດທິທາງເພດຂອງໄວໜຸ່ມ ...
- ► ຍົກບັນຫາກ່ຽວກັບ ສຸຂະພາບໄວໜຸ່ມ ມາສົນທະນາ ແລກປ່ຽນທັດສະນະ ກັບໝູ່ເພື່ອນ ໃນການຮຽນຮູ້ ພ້ອມທັງການຝຶກຝົນທັກສະຊີວິດ ທີ່ຈຳເປັນ ເພື່ອປົກປ້ອງຈາກຄວາມສ່ຽງດ້ານສຸຂະພາບ
- ► ຮັບຟັງບັນຫາຂອງເພື່ອນ ທີ່ມາປຶກສາ ແລະ ໃຫ້ຄຳແນະນຳດ້ວຍການອະທິບາຍຂໍ້ມູນທີ່ຖືກຕ້ອງ ແລະ ຂໍ້ມູນທີ່ບິດເບືອນ (ຂ່າວລື), ບໍ່ຕັດສິນ, ໃຫ້ໂອກາດເພື່ອນໄດ້ຄິດພິຈາລະນາ ແລະ ຕັດສິນໃຈ ແກ້ໄຂບັນຫາດ້ວຍຕົນເອງ
- ► ກໍລະນີທີ່ຕ້ອງການຄຳແນະນຳເພີ້ມ ຫຼື ສິ່ງຕໍ່ດ້ານການບໍລິການ “ພຊພ” ຕ້ອງເຮັດການປະສານງານ ໃຫ້ແກ່ເພື່ອນ
- ► ເຮັດການໂຄສະນາຂະຫຍາຍເຄືອຂ່າຍ ຂອງ “ພຊພ”
- ► ເຂົ້າຮ່ວມ ກິດຈະກຳ ທີ່ເປັນປະໂຫຍດແກ່ສັງຄົມ ຕາມການຈັດຕັ້ງຂອງຕົນ ແລະ ຂອງກຸ່ມ “ພຊພ”

ສະມາຄົມສົ່ງເສີມສຸຂະພາບຄອບຄົວ (PFHA)

# 1.3 ເງື່ອນໄຂ ເຂົ້າເປັນ “ເພື່ອນຊ່ວຍເພື່ອນ”

- ມີອາຍຸ ລະຫວ່າງ 14-24 ປີ
- ບໍ່ຈຳກັດເພດ
- ມີຄຸນສົມບັດດີ
- ມັກຮຽນຮູ້, ຝຶກຝົນຕົນເອງ ແລະ ຊ່ວຍເຫຼືອຜູ້ອື່ນ
- ມີນ້ຳໃຈອາສາ ແລະ ເສຍສະຫຼະ
- ຮັກໝູ່ເພື່ອນ
- ໄດ້ຮັບອະນຸມັດຈາກຜູ້ປົກຄອງ ?
- ໄດ້ຮັບຄວາມເຫັນດີ ຈາກ ທາງໂຮງຮຽນ ?

ສະມາຄົມສົ່ງເສີມສຸຂະພາບຄອບຄົວ
(PFHA)

# 1.4 ຄວາມຄາດຫວັງ ຈາກ ການອົບຮົມ ອາສາສະໝັກ “ພຊພ”

- ບັນທຶກຜົນງານ ແລະ ລາຍງານໃຫ້ຫົວໜ້າກຸ່ມ ແລະ ສສສຄ
- ແຈກຢາຍ ສື່ໂຄສະນາທີ່ກ່ຽວຂ້ອງໃຫ້ໝູ່ເພື່ອນ
- ເຂົ້າຮ່ວມກິດຈະກຳສຳຄັນຕ່າງໆຂອງກຸ່ມ, ຂອງໂຮງຮຽນ ແລະ ຂອງ ສສສຄ ຕາມເງື່ອນໄຂ ລວມທັງ ການຈັດຝຶກອົບຮົມເພີ່ມເຕີມຄວາມຮູ້
- ເຂົ້າຮ່ວມກິດຈະກຳ ການໃຫ້ຄວາມຮູ້ດ້ານສຸຂະພາບຂອງໄວໜ ◌ຸ◌່ມ ຕາມແຜນການຂອງ ໂຮງຮຽນ ແລະ ຂອງ ສສສຄ
- ເຂົ້າຮ່ວມຝຶກຊ້ອມກິດຈະກຳ ຫາລາຍໄດ້ເຂົ້າກຸ່ມ ແລະ ສສສຄ ຕາມແຜນທີ່ວາງໄວ້
- ເຂົ້າຮ່ວມປະຊຸມກຸ່ມ ຕາມລະບຽບ ແລະ ການນັດໝາຍ